# ເທສການມະຫາສົງການ
# ປີໃຫມ່ລາວ

ຄຳວ່າ "ກຸດ" ຫຼືວ່າ "ຕຣຸດ" ແປວ່າຫມົດສ້ຽງ. "ສົງການ" ແປວ່າ ກ້າວລ່ວງໄປ ຫຼືຍ້າຍທີ່. ບຸນສົງການປີໃຫມ່ລາວ ທີ່ປວງຊົນລາວເຮົາ ມັກປະຕິບັດກັນມາ ແຕ່ບູຮານນະການ ແມ່ນຈັດຂຶ້ນ ຢູ່ໃນຊ່ວງຣະຫວ່າງ ທີ່ຣາສີມີນ ຍ້າຍເຂົ້າສູ່ຣາສີເມດ, ກໍານົດທາງເຂົ້າສູ່ສຸຣິຍະຄະຕິ. ປີໃຫມ່ລາວ ແມ່ນຕົກຢູ່ໃນຊ່ວງຂອງວັນທີ 13, 14 ແລະ 15 ເດືອນເມສາ (ເດືອນຫ້າລາວ) ຂອງທຸກໆປີ. ມື້ກຸດສົງການມີສາມມື້ຄື:

- <u>ມື້ສັງກາດລ່ວງ:</u> ເປັນມື້ທຳອິດ, ໃນຕອນບ່າຍຈະມີການເຕົ້າໂຮມຝູງຊົນ, ນິມົນເອົາພຣະພຸທຮູບ ລົງໄປປະດິສຖານໄວ້ ທີ່ສາລາໂຮງທັມ -ຫໍສົງ, ຊານສິມ. ພຣະສົງ ແລະພຸທສາສນິກະຊົນທັງຫຼາຍ ຈະມາຮ່ວມກັນເຮັດນ້ຳຫອມ-ນ້ຳສົງພຣະ ຊຶ່ງຖືວ່າເປັນນ້ຳສັກສິດ, ເອົາໄປພົມເຮືອນຊານ, ເອົາຫວົດໃສ່ລູກເຕົ້າ, ຫຼານເຫຼນ ນັ້ນຖືວ່າດີຫຼາຍ. ກ່ອນຈະຫົດສົງພຣະພຸທຮູບນັ້ນ ກໍຈະຕ້ອງທຳຄວາມສອາດໃຫ້ພຣະພຸທຮູບ ແລ້ວກໍພາກັນກ່າວຄຳບູຊາ ເອົາດອກໄມ້ໃຫວ້ພຣະ, ປ່າວສັກເຄເທວະດາ, ອະທິຖານການຫົດສົງນີ້ ມີຄວາມຫມາຍເປັນການຂໍຟ້າຂໍຝົນຊົລທາຕົກມາ ໃຫ້ຄວາມຮົ່ມເຢັນແກ່ມນຸສຊົນ ແລະມີຄວາມສຸກຕລອດໄປ.

- <u>ມື້ສັງກາດເນົາ ຫຼືສັງຂານເນົາ</u>, ຄືມື້ຢຸດ ຫຼືມື້ພັກ, ເປັນວັນທີສອງຂອງງານ. ມື້ທີ່ອອກຕົນຍາດໂຍມສ້າງນ້ຳກະທຳບຸນ ຢູ່ຕາມບ້ານເຮືອນຂອງໃຜລາວ ເພື່ອເປັນການອຸທິດສ່ວນບຸນກຸສົລ ໄປຫາຜູ້ທີ່ລ່ວງລັບໄປແລ້ວ ອັນໄດ້ແກ່ບິດາມານດາ, ສາມີພັນຣະຍາ, ລູກເຕົ້າຫຼານເຫຼນ, ຍາດຕິກາວົງສາ ຫຼືຄຣູອຸປະຊາອາຈານເປັນຕົ້ນ.

- <u>ມື້ສັງກາດຂຶ້ນ</u> ຄືເປັນມື້ປ່ຽນຈຸລສັກກະຣາດ (ຈ.ສ.). ຈຸລສັກກະຣາດ ແປວ່າສັງກາດນ້ອຍ. ສ່ວນພຸທສັກກະຣາດ ຫຼືວ່າ ພ.ສ. ແມ່ນຖືກ ຈະປ່ຽນໃນເດືອນຫົກເພັງ, ເປັນມື້ທີສາມຂອງງານ, ເປັນມື້ເຮັດບຸນຕັກບາດ ຖວາຍສັງຄທານຢູ່ວັດ, ຕົບພຣະທາດຊາຍ, ສົງນ້ຳແກ່ພຣະສົງຄ໌ສົມມະເນນ, ເຖົ້າແກ່ອະວຸໂສ ພ້ອມທັງບາສີໃຫ້ແກ່ພຣະພຸທຮູບ, ພຣະສົງຄ໌, ສົມມາຄາຣະວະ ແລ້ວນິມົນອັນເຊີນເອົາພຣະພຸທຮູບຂຶ້ນ ໄປປະຈຳທີ່ຢູ່ບ່ອນເກົ່າ.

ເທສການມະຫາສົງການປີໃຫມ່ລາວ ໄດ້ມີມູນເຫດເປັນນິທານ ເລົ່າຂານ ແລະສືບທອດກັນມາຄື: ມີເສດຖີຄົນນຶ່ງ ໄດ້ມີພັນຣະຍາມາໄດ້ 3-4 ປີແລ້ວ ແຕ່ບໍ່ມີລູກ ຈຶ່ງໄປຂໍເອົາລູກນຳຕົ້ນໄຣໃຫຽ່ຕົ້ນນຶ່ງ ໃນນັ້ນໄດ້ມີເທວະດາສິງສະຖິດຢູ່ ຈຶ່ງໄດ້ມີຄວາມກະຣຸນານຳເອົາຄຳໄຫວ້ວອນເຂົ້າເຝົ້າທູນພຣະອິນ. ພຣະອິນຈຶ່ງໃຫ້ພຣະທັມມະບານ (ເທວະບຸດອົງນຶ່ງ ຊຶ່ງແມ່ນພຣະໂພທິສັດ) ລົງມາປະຕິສົນທິ ໃນຄັນຂອງພັນຣະຍາຂອງເສດຖີຄົນນັ້ນ. ທັມມະບານກຸມມານ ເມື່ອປະສູດອອກມາ ກໍຈະເຣີນວັຍ ຮຽນໄຕຣເພດຈົບ, ເປັນອາຈານການທຳມົງຄົລ ແກ່ມວນຊົນທັງປວງ. ດັ່ງນັ້ນ, ທ້າວກະບິລພົມ ຜູ້ຊຶ່ງຢູ່ເທິງພົມມະໂລກ ຈຶ່ງລົງມາຖາມປິສນາບັນຫາ ກັບທັມມະບານກຸມມານ. ຖ້າທັມມະບານກຸມມານ ແກ້ບັນຫາໄດ້ຫມົດ, ທ້າວກະບິລພົມ ຍອມຕັດຫົວຂອງຕົນເອງ ຖວາຍຄວາມສລຽວສລາດຂອງທັມມະບານກຸມມານ. ຖ້າຫາກທັມມະບານກຸມມານ ແກ້ບໍ່ໄດ້ ຈະໄດ້ຖືກຕັດຫົວບູຊາທັມ. ຄຳຖາມມີສາມຂໍ້ດັ່ງນີ້:

- 1. ຕອນເຊົ້າ, ຣາສີຂອງຄົນຢູ່ໃສ?
- 2. ຕອນທ່ຽງ, ຣາສີຂອງຄົນຢູ່ໃສ?
- 3. ຕອນແລງ, ຣາສີຂອງຄົນຢູ່ໃສ?

ທ້າວກະບິລພົມ ໄດ້ໃຫ້ເວລາ ທັມມະບານກຸມມານເອົາໄປຄິດ 7 ວັນ ເພື່ອແກ້ບັນຫາຮອດວັນຖ້ວນຫົກ. ທັມມະບານກຸມມານ ກໍຄິດບໍ່ອອກ ຈຶ່ງໄດ້ໄປພັກພ່ອນຢູ່ຕົ້ນໄມ້ໃຫຽ່. ໃນເວລານັ້ນ ມີນົກອິນຊີສອງຜົວເມັຽ ກໍາລັງສົນທະນາໃນການຕອບບັນຫາຂອງທ້າວກະບິລພົມຢູ່, ທັມມະບານກຸມມານ ຈຶ່ງໄດ້ຮູ້ຄຳຕອບ ແລະຈຶ່ງແກ້ບັນຫາໄດ້ຄື:

- 1. ຕອນເຊົ້າ, ຣາສີຄົນ ຢູ່ທີ່ຫນ້າ. ສນັ້ນ, ຕື່ນເຊົ້າມາຜູ້ຄົນຈຶ່ງສ່ວາຍຫນ້າ.

---

<u>ພິມ ແລະເຜີຽແຜ່ໂດຽ:</u> ອົງການລາວ ເພື່ອຄວາມກ້າວຫນ້າໃນສະຫະຣັຖ
Lao Advancement Organization of America (LAO America)
Lao Cultural Center Building. 2648 West Broadway Avenue.
Minneapolis, MN 55411-USA
Tel: 612.302.9048. Fax: 612.522.2431. E-mail: laoamerica@laoamerica.org
Web Site: www.laoamerica.org

- 2. ຕອນທ່ຽງ, ຣາສີຂອງຄົນຢູ່ທີ່ໜ້າອົກ ແລະຮ່າງກາຍ. ດັ່ງນັ້ນ, ໃນຕອນທ່ຽງ ຜູ້ຄົນຈຶ່ງພາກັນເອົານ້ຳລູບໜ້າອົກ ຫຼືອາບ ນ້ຳ.
- 3. ຕອນແລງ ຫຼືຕອນຄ່ຳ, ຣາສີຂອງຄົນຢູ່ທີ່ຕີນ. ຜູ້ຄົນເຮົາ ຈຶ່ງພາກັນລ້າງຕີນກ່ອນເຂົ້ານອນ.

ທ້າວກະບິລພົມ ຈຶ່ງຍອມຕັດຫົວຂອງຕົນເອງຕາມສັນຍາ, ຖືວ່າຫົວຂອງກະບິລພົມນັ້ນສັກສິດ. ຖ້າຈະຖິ້ມລົງເທິງພື້ນແຜ່ນດິນ, ກໍຈະເກີດເປັນໄຟໄໝ້ໂລກ. ຖ້າຈະໂຍນຖິ້ມໄປເທິງອາກາດ, ຈະເກີດການແຫ້ງແລ້ງ, ມວນມນຸສຈະລົ້ມຕາຍ. ຖ້າຈະຖິ້ມລົງໃສ່ແມ່ນ້ຳມະຫາສມຸດ ກໍຈະເຫືອດແຫ້ງ. ດັ່ງນັ້ນ, ກ່ອນຈະຕັດຫົວຂອງຕົນ, ທ້າວກະບິລພົມ ຈຶ່ງໄດ້ເອີ້ນເອົາລູກສາວທັງເຈັດຄົນຂອງຕົນ ມາຮັບເອົາຫົວ ແລ້ວນຳແຫ່ອ້ອມຮອບເສົາພຣະສເມນ 60 ຮອບ. ຈາກນັ້ນ, ກໍນຳເອົາໄປປະດິສຖານໄວ້ ທີ່ເຂົາໄກຣາດ. ພໍເຖິງກຳນົດປີມາ, ລູກສາວທັງເຈັດ ກໍຜັດປ່ຽນກັນໄປອັນເຊີນເອົາ ຫົວຂອງ ພຣະບິດາ ມາແຫ່ອ້ອມເສົາພຣະສເມນທຸກໆປີ ພ້ອມທັງເອົານ້ຳອົບນ້ຳຫອມອັນສັກສິດຫົດສົງ ເພື່ອສະແດງເຖິງຄວາມກະຕັນຍູກະຕະເວທີ ແລະສແດງຄວາມຂອບອົກຂອບໃຈ ຕໍ່ພຣະບິດາຂອງຕົນ ທີ່ໄດ້ໃຫ້ນ້ຳຟ້ານ້ຳຝົນ ແລະຄວາມອຸດົມຊຸ່ມເຢັນ ໃຫ້ແກ່ພື້ນແຜ່ນດິນ ແລ້ວເທພທິດາທັງເຈັດ ກໍ ກັບຂຶ້ນໄປເທິງເທວະໂລກດັ່ງເດີມ. ນັ້ນ, ແມ່ນທີ່ມາຂອງການແຫ່ນາງສັງຂານ ໃນມື້ສັງກາດລ່ວງ. ໃນແຕ່ລະປີ, ຖ້າສັງກາດລ່ວງຕົກຖືກວັນໃດ, ຈະແມ່ນລູກສາວຂອງທ້າວກະບິລພົມ ທີ່ເກີດໃນວັນນັ້ນ ເປັນຜູ້ນຳພາການແຫ່ແຫນ.

<u>ຖືກວັນອາທິດ:</u> ແມ່ນຖືກ ເທພທິດາ ທົງສະ ເທວີ. ຈະຖັດດອກພິລາ ແລະສເດັດມາເທິງຫຼັງຄຸດ.
<u>ຖືກວັນຈັນ:</u> ແມ່ນ ເທພທິດາ ໂຄຣາຄະເທວີ, ຈະຖັດດອກກາງຂອງ ແລະສເດັດມາເທິງຫຼັງເສືອໂຄ່ງ
<u>ຖືກວັນອັງຄານ:</u> ແມ່ນ ເທພທິດາ ຮັກສະເທວີ, ຈະຖັດດອກບົວຫຼວງ ແລະສເດັດມາເທິງຫຼັງໝູ.
<u>ຖືກວັນພຸດ:</u> ແມ່ນ ເທພທິດາ ມົນທາເທວີ, ຈະຖັດດອກຈຳປາ ແລະສເດັດມາເທິງຫຼັງລາ
<u>ຖືກວັນພະຫັດ:</u> ແມ່ນ ເທພທິດາ ກິຣະນີເທວີ, ຈະຖັດດອກມົນທາ ແລະສເດັດມາເທິງຫຼັງຊ້າງ
<u>ຖືກວັນສຸກ:</u> ແມ່ນ ເທພທິດາ ກິມິທາເທວີ, ຈະຖັດດອກບົວນ້ອຍ ແລະສເດັດມາເທິງຫຼັງຄວາຍ
<u>ຖືກວັນເສົາ:</u> ແມ່ນ ເທພທິດາ ມະໂຫທອນເທວີ, ຈະຖັດດອກສຳຫາວ ແລະສເດັດມາເທິງຫຼັງນົກຍູງ.

ໃນວາຣະດິຖີ ບຸນຂຶ້ນປີໃໝ່ລາວ ຫຼືເອີ້ນກັນອີກຢ່າງນຶ່ງວ່າ ບຸນຫົດນ້ຳ ຫຼືບຸນສົງການ, ນອກຈາກຈະໄດ້ພາກັນ ໄປທຳບຸນທີ່ວັດ ໃນການຫົດສົງພຣະພຸທຮູບ ເພື່ອຂໍຂະມາລາໂທດ ແລະພອນ ເພື່ອໃຫ້ຢູ່ດີມີແຮງໃນບຸນປີໃໝ່, ຫົດສົງພຣະພິຂຸສົງຄ໌ ເພື່ອຂໍຂະມາລາໂທດ ທີ່ໄດ້ລ່ວງເກີນ ດ້ວຍເຈຕນາ ຫຼືບໍ່ເຈຕນາ ເພື່ອໃຫ້ຕົນເອງມີຄວາມສຸກສວັດດີໃນປີໃໝ່ແລ້ວ, ຕາມເຮືອນຊານບ້ານຊ່ອງ ກໍຍັງມີການສົງນ້ຳ ໃຫ້ຜູ້ເຖົ້າຜູ້ແກ່ ແລະຜູ້ຄົນທີ່ເຄົາຣົບ ແລະນັບຖື ເພື່ອເປັນການຂໍຂະມາລາໂທດ, ສົມມາຄາຣະວະ ແລະໃຫ້ພອນອັນປະເສີດ ດ້ວຍການທຳລາບາສີສູ່ຂ້ວນໃຫ້. ພ້ອມກັນນັ້ນ, ຊາວລາວໜຸ່ມສາວນ້ອຍໃຫຽ່ທັງຫຼາຍ ກໍພາກັນຫົດສົງ ສາດນ້ຳໃສ່ກັນ ແລະອ່ວຍພອນໃຫ້ກັນ ແລະກັນ ເພື່ອໃຫ້ມີສຸຂພາບແຂງແຮງ, ມີຄວາມອຸດົມສົມບູນ ແລະມີໂຊກລາບອັນປະເສີດມານຳປີໃໝ່, ສ່ວນເຄາະເຂັນ ຄວາມບໍ່ດີຕ່າງໆ ທີ່ຕິດຕາມຢູ່ຕາມເສື້ອຜ້າ ຫຼືຕາມຮ່າງກາຍ ກໍໃຫ້ສລາຍໄປ ໄປຕາມປີເກົ່າ.

---

<u>ເອກກະສານອ້າງອີງ:</u>
- ບົດຂຽນຂອງ ທ່ານ ມະຫາ ບຸນຮ່ວມ ດວງປັນຍາ
- ບົດຂຽນຂອງ ທ່ານ ມະຫາ ບຸນທັນ ສຸພົນທະວົງສ໌
- ເອກກະສານ ບຸນປີໃໝ່ລາວ ຂອງສະມາຄົມເຄືອຍາດ

<u>ພິມ ແລະເຜີຍແຜ່ໂດຍ:</u> ອົງການລາວ ເພື່ອຄວາມກ້າວໜ້າໃນສະຫະຣັຖ
Lao Advancement Organization of America (LAO America)
Lao Cultural Center Building. 2648 West Broadway Avenue.
Minneapolis, MN 55411-USA
Tel: 612.302.9048. Fax: 612.522.2431. E-mail: laoamerica@laoamerica.org
Web Site: www.laoamerica.org